ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************

ແຂວງບໍລິຄໍາໄຊ

ເລກທີ 013-..-.. / ຂບຊ

ທີ່ ບໍລິຄໍາໄຊ, ວັນທີ 10 SEP 2014

# ຄໍາສັ່ງ

## ຂອງທ່ານເຈົ້າແຂວງ-ແຂວງບໍລິຄໍາໄຊ

## ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ກວດກາຝຸ່ນ, ແນວພັນພືດ ແລະ ຢາຂ້າຫຍ້າ ລວມທັງຢາປາບສັດຕູພືດອື່ນໆ ທີ່ນໍາໃຊ້ຢູ່ພາຍໃນ ແຂວງບໍລິຄໍາໄຊ

ເຖິງ : ຫົວໜ້າພະແນກການອ້ອມຂ້າງແຂວງ, ເຈົ້າເມືອງ 7 ຕົວເມືອງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ 7 ຕົວເມືອງ ພາຍໃນ ແຂວງບໍລິຄໍາໄຊ

- ອີງຕາມ ກົດໝາຍ ວ່າດ້ວຍກະສິກໍາ, ສະບັບເລກທີ 01 / 98 / ສພຊ, ລົງວັນທີ 10 ຕຸລາ 1998.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກໍາ ແລະ ປ່າໄມ້, ເລກທີ 2200 / ກປ, ລົງວັນທີ 14 ກັນຍາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ.
- ອີງໃສ່ ຄໍາສັ່ງ ຂອງລັດຖະມົນຕີວ່າການກະສິກໍາ ແລະ ປ່າໄມ້, ເລກທີ 2592 /ກປ, ລົງວັນທີ 15 ສິງຫາ 2014 ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ກວດກາຝຸ່ນ, ແນວພັນພືດ ແລະ ຢາຂ້າຫຍ້າ ລວມທັງຢາປາບສັດຕູພືດອື່ນໆ ທີ່ນໍາໃຊ້ຢູ່ ສປປ ລາວ.

ໃນໄລຍະຜ່ານມາ ບັນດາພະແນກການອ້ອມຂ້າງແຂວງ ແລະ ອໍານາດການປົກຄອງທ້ອງຖິ່ນທຸກຂັ້ນ ໄດ້ໃຫ້ຄວາມຮ່ວມມືດີພໍສົມຄວນ ຕໍ່ກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນໍາເຂົ້າ ປັດໃຈຮັບໃຊ້ການຜະລິດກະສິກໍາ ເປັນຕົ້ນແມ່ນ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ອັນໄດ້ເຮັດໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ໄດ້ຊົມໃຊ້ ປັດໃຈຮັບໃຊ້ການຜະລິດ ທີ່ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ລະບຽບກົດໝາຍ ເຊິ່ງໄດ້ປະກອບສ່ວນເຂົ້າໃນການຍົກສະມັດຕະພາບການຜະລິດໃຫ້ສູງຂຶ້ນ, ສ້າງລາຍຮັບໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ໄດ້ເປັນຢ່າງດີ; ແຕ່ຄຽງຄູ່ກັນນັ້ນ ກໍ່ຍັງມີຜູ້ປະກອບການຈໍານວນໜຶ່ງ ນໍາເຂົ້າ ປັດໃຈຮັບໃຊ້ການຜະລິດ ເຊັ່ນ: ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າທີ່ຫ້າມນໍາໃຊ້ ແຕ່ຊໍ້າພັດລັກລອບນໍາເຂົ້າ, ຈໍາໜ່າຍ ແລະ ນໍາໃຊ້ ຢ່າງຊະຊາຍ ໂດຍບໍ່ຄໍານຶງເຖິງຜົນກະທົບຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ອັນໄດ້ສ້າງພາບພົດບໍ່ດີໃຫ້ແກ່ການຊີ້ນໍາ-ນໍາພາ ທາງດ້ານເຕັກນິກວິຊາການ ຂອງຂະແໜງການກະສິກໍາ ແລະ ປ່າໄມ້, ເຮັດໃຫ້ຊາວກະສິກອນ ໄດ້ຮັບຜົນກະທົບທາງລົບ, ອັບປະໂຫຍດ, ຫຼຸບທຶນ, ເກີດມີໜີ້ສິນ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມ ແລະ ປະເທດຊາດ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ແນໃສ່ບັນລຸຄາດໝາຍສູ້ຊົນຜະລິດກະສິກໍາ ໂດຍສະເພາະການຜະລິດເຂົ້າລວມທົ່ວແຂວງ ຮອດປີ 2015 ໃຫ້ໄດ້ 179.480 ໂຕນ.

## ເຈົ້າແຂວງ-ແຂວງບໍລິຄໍາໄຊ ອອກຄໍາສັ່ງ:

1. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ ຊີ້ນໍາ ຂະແໜງປູກຝັງແຂວງ, ດ່ານປ້ອງກັນພືດສາກົນ, ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ໜ່ວຍງານປູກຝັງເມືອງ ແລະ ດ່ານປະເພນີ ໃນການຄຸ້ມຄອງກວດກາ ການນໍາເຂົ້າ

ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຈາກຕ່າງປະເທດ ເຂົ້າມາພາຍໃນທ້ອງຖິ່ນຂອງຕົນຢ່າງເຂັ້ມງວດ ຕາມເຕັກນິກ ແລະ ລະບຽບການ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການອຸດສະຫະກຳ ແລະ ການຄ້າ, ພາສີ, ປກສ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ.

2. ບໍ່ອະນຸຍາດໃຫ້ ໂຄງການພັດທະນາ ພາກລັດ, ພາກທຸລະກິດ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ນຳເຂົ້າ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ທີ່ບໍ່ໄດ້ຈົດທະບຽນວິຊາການຕາມລະບຽບກົດໝາຍຂອງ ສປປ ລາວ.
3. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຊີ້ນຳ ຂະແໜງປູກຝັງແຂວງ ພິວພັນ ກົມປູກຝັງ ເພື່ອຈັດສົ່ງ ບັນຊີ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ທີ່ໄດ້ຮັບການຈົດທະບຽນວິຊາການ ຖືກຕ້ອງຕາມລະບຽບກົດໝາຍ ແລະ ບັນຊີ ຢາປາບສັດຕູພືດ ທີ່ໄດ້ຍົກເລີກນຳໃຊ້ໃນ ສປປ ລາວ ໃຫ້ດ່ານປ້ອງກັນພືດສາກົນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ໜ່ວຍງານປູກຝັງເມືອງ ແລະ ດ່ານປະເພນີ.
4. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຊີ້ນຳ ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແຂວງ ເປັນເຈົ້າການຈັດຕັ້ງປະຕິບັດການວິໄຈ, ຢັ້ງຢືນຄຸນນະພາບ ແລະ ຄວາມຖືກຕ້ອງຂອງມາດຕະຖານຝຸ່ນ ສຳລັບການປູກຝັງ ທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ.
5. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຊີ້ນຳ ຂະແໜງປູກຝັງແຂວງ ປະສານສົມທົບ ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ(ໜ່ວຍງານປູກຝັງເມືອງ) ໃນການຄຸ້ມຄອງ, ກວດກາການບໍລິການຈຳໜ່າຍ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ພາຍໃນທ້ອງຖິ່ນຂອງຕົນ ຕາມລະບຽບກົດໝາຍ, ລວມທັງກວດກາລາດຕະເວນພາຫະນະທີ່ບັນທຸກ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ທີ່ເລາະຂາຍ ແລະ ຈຳໜ່າຍ ຕາມບ້ານ ແລະ ກຸ່ມບ້ານຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ.
6. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຊີ້ນຳ ຂະແໜງປູກຝັງແຂວງ ພົວພັນ ກົມປູກຝັງ ເພື່ອຈັດສົ່ງ ຂໍ້ຕົກລົງຂອງລັດຖະມົນຕີ ກ່ຽວກັບ ການຄຸ້ມຄອງ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ແລະ ຄູ່ມື ການກວດກາແນວພັນພືດ ແລະ ຢາປາບສັດຕູພືດ ໃຫ້ແກ່ໜ່ວຍງານກວດກາຢາປາບສັດຕູພືດ ທຸກຂັ້ນ ແລະ ເຈົ້າໜ້າທີ່ປ້ອງກັນພືດປະຈຳດ່ານຊາຍແດນ ເພື່ອເປັນເຄື່ອງມືຄຸ້ມຄອງ, ກວດກາ ທາງດ້ານເຕັກນິກວິຊາການ ໃນການປະຕິບັດວິຊາສະເພາະ ຕາມມາດຕະຖານສາກົນ.
7. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຊີ້ນຳ ຂະແໜງປູກຝັງແຂວງ ປະສານສົມທົບ ຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ, ສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເຜີຍແຜ່, ໃຫ້ຄວາມຮູ້ ແກ່ຊາວກະສິກອນ, ກຸ່ມຜະລິດ ແລະ ຜູ້ປະກອບການ ກ່ຽວກັບ ການເກັບຮັກສາ ແລະ ການນຳໃຊ້ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຖືກຕ້ອງຕາມຫຼັກວິຊາການ.
8. ມອບໃຫ້ບັນດາພະແນກການອ້ອມຂ້າງ ແຂວງ, ເຈົ້າເມືອງ 7 ຕົວເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ 7 ຕົວເມືອງ ພາຍໃນແຂວງບໍລິຄຳໄຊ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ມີຜົນສຳເລັດສູງ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳຂັ້ນເທິງ ຊາບເປັນປົກກະຕິ.
9. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ-ແຂວງບໍລິຄຳໄຊ

ດຣ.ສຸວັນນີ ໄຊຊະນະ
Dr Souvanny XAYSANA

ບ່ອນສົ່ງ:
1. ພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ 1 ສະບັບ
2. ສຳເນົາ 1 ສະບັບ